ໂອ່ຍ ນໍ ນໍ...

| | | |
|---|---|---|
| ບັດນີ້ | ເຮົາຊິຂໍໃຂເອີ້ນ | ລຳຜູ່ໄທຮ້ອງສັ່ງ |
| | ຝາກໄປຍັງກ່ຳກ້ອນ | ສາວດອນເຈົ້າ ໃຫ້ອີ່ຕົນ ແມ່ເດີ.... |
| ຈັ່ງແມ່ນ | ຮັກເຈົ້າຫຼາຍເຫຼືອລົ້ນ | ຈົນລືມຕົນຊິອຸກອັ່ງ |
| | ນັ່ງຄິດເຫັນຕັ້ງແຕ່ໜ້າ | ສາວດອນນັ້ນຢູ່ຈັ່ງໃດ ນ້ອງເອີຍ.... ນ້ອງເອີຍ |
| ໂອ໋ຍນໍ | ສາວລະຫານ້ຳໃຕ້ | ຊິຄິດຮ່ຳນຳອວນຊາຍ ຢູ່ບໍນ້ອງ |
| | ຜູ່ທີ່ໝາຍໃຈປອງ | ຢາກຮ່ວມສອງຽງຊ້ອນ |
| ແຕ່ວ່າ | ສີພັນດອນບໍ່ເຄີຍຮູ້ | ຕອນຮຽນຄຣູເພິ່ນທ່າໃຫຽ່ |
| | ເຮົາເປັນຊາຍຜູ້ຂີ້ຮ້າຍ | ອ້າຍເດີນຜ້າຍບໍ່ລ່ຳຈາ ຫຼ້າເອີຍ ຫຼ້າເອີຍ.... |
| ຕອນນັ້ນ | ຍາມເຮົາພໍ້ພົບໜ້າ | ດອນພັດເບີດເສີຍເມີຍ |
| | ບໍ່ຄິດທວນຫາເລີຍ | ຕອນຢູ່ປາຍຊານນ້ອຍ |
| | ດອນຍັງຄວນເພງຮ້ອງ | ປາຖນາເພິ່ນເອີ້ນຢອກ |
| | ເກືອບຊິບອກໃຫ້ຮູ້ | ວ່າເຮົານີ້ລັກມັກນາງ ລະຫນາ.... ລະຫນາ.... |
| ທຸກວັນ | ເລີກໂຮງຮຽນກັບຄືນບ້ານ | ຢູ່ປາຍຊານອ້າຍຍັງຈີ່ |
| | ສາວຜູ່ໄທຂີ້ດີ້ | ຍັງມີຍິ້ມສິ່ງຫວານ ທັ້ນເດ |
| ຈົນວ່າ | ຫົວໃຈເພຈົນຝືນກັ້ນ | ເຫັນກັນ ບໍ່ຮ້ອງໃສ່ |
| | ສາວຜູ່ໄທເປັນຣຸ່ນໃຫຽ່ | ເຮົາພັດເປັນຣຸ່ນນ້ອງ |
| | | ຍາມເຮົາຮ້ອງເອີ້ນບໍ່ຂານ ລະຫນາ ລະຫນາ.... |
| ໂອ໋ຍນໍ | ເລີຍບໍ່ກ້າກ່າວຕ້ານ | ຢ້ານວ່າເພິ່ນຊິທິນເຂີນ |
| | ອາຍເພື່ອນຝູງຢູ່ຫຼັກເຈັດ | ຢ້ານຊື່ສຽງນ້ອງຈົມມ້ວຍ |
| | ເປັນຄົນຊວຍຈົນສຸດຈ້ອນ | ສີພັນດອນບໍ່ຫຼີງລ່ຳ |
| | ສ່ຳຊິຍິ້ມສິ່ງໃຫ້ | ບໍ່ເຄີຍໄດ້ຊິທັກທາຍ ດອກໜາ..... ລະຫນາ.... |
| ຕອນນັ້ນ | ມີແຕ່ສົມນ້ຳໜ້າ | ມັກສາວຊ່າຕ້ອງຜິດຫວັງ |
| | ບໍ່ອີ່ດູກູນັງ | ເບິ່ງແບບຊັງເບະສິບບຸ້ຍ |
| | ຈັ່ງແມ່ນຄຸຍເຕັມທີ່ອ້າຍ | ຜູ່ໝາຍປອງຕັ້ງແຕ່ກ່ອນ |
| | ດອນພັດເບີດຢູ່ຟ້າ | ບໍ່ເຫັນໜ້າຜູ່ຄິດນຳ ຊ້ຳນາ... ແທ້ຫນາ.... |

| | | |
|---|---|---|
| ຕອນນັ້ນ | ສາວລະຫາເພິ່ນມອງຂ້າມ | ເດັກກະຈອກຜູ້ຫຼົງໄຫຼ |
| | ຜູ່ທີ່ຫຼົງສາວຜູ່ໄທ | ເກືອບແມ່ນຕາຍນຳນ້ອງ |
| | ອ້າຍຫມາຍປອງຢາກຄຽງເຈົ້າ | ສາວບໍ່ເອົາຕາໃສ່ |
| | ລືມຄົນເກົ່າເອົາຂອງໃຫມ່ | ລືມຜູ່ຊາຍຮຸ່ນນ້ອງ |
| | | ໃຫ້ຫມອງເສົ້າຢູ່ຜູ່ດຽວ ລະຫນາ |
| ເຖິງວ່າ | ແມ່ນອ້າຍຢາກເວົ້າກ້ຽວ | ດອນທ່າໃຫຍ່ຫົວໃຈງອນ |
| | ເຂົາຫຼົງໄຫຼອອນຊອນ | ບ່າວລີເຊ ຜູ່ງາມໂກ້ |
| ຈັ່ງວ່າ | ສົງສານໂຕກາຜອງນັ້ນ | ຄວາມສຳຄັນບໍ່ທັນຫມູ່ |
| | ຊູ້ບ້ານນອກບອກບໍ່ໄດ້ | ໃຈມັນຊ້ຳບວບຢູ່ໃນ ນ້ອງເອີຍ ນ້ອງເອີຍ |
| ເພາະວ່າ | ສີພັນດອນຮອດບໍ່ໃຫ້ | ຄວາມເປັນມິດທີ່ເຄີຍມີ |
| | ພົບຫນ້າຫາທາງຫນີ | ຍ່າງຫຼີກໄກເຈົ້າໄລເວັ້ນ |
| | ຄືກັບເວນຂອງອ້າຍ | ທີ່ຫມາຍໃຈໄດ້ແຕ່ລ່ຳ |
| | ຢາກນຳໄປກວ່າຕ້ານ | ກຳເກງເຈົ້າເວົ້າໃຫ້ອາຍ.... ແທ້ໃດ.... ຫຼ້າເອີຍ |
| ໂອ໋ຍນໍ | ຄິດຂຶ້ນມາແທ່ງເປັນຮ້າຍ | ອ້າຍເຝົ້າຮັກທາງຫຼັງ |
| | ແມ່ນຊິເດີນຄືນທາງ | ອ້າຍສິ້ງຊອມທຸກແລງເຊົ້າ |
| ຕອນນັ້ນ | ເຈົ້າເຮັດຫຽັງອ້າຍຈຳໄດ້ | ຈົດຂຶ້ນໃຈບໍ່ເວົ້າຕື່ມ |
| | ບໍ່ເຄີຍລືມຮອດມື້ນີ້ | ເຣື່ອງຂອງເຈົ້າອ້າຍຈື່ຈຳ ແທ້ດາຍ.... ແທ້ນາ... |
| ຄືກັນ | ກັບທີ່ຕອນດອນມີເຣື່ອງ | ເສັຽໃຈຫຼາຍຈົນວ່າລ່າຍ |
| | ອ້າຍຢາກຫມາຍເຂົ້າຊວ້ານ | ຊູເຈົ້າເວົ້າປອບໃຈ |
| | ເຫັນສາວດອນໂສກາໃຫ້ | ມັນເຈັບໃຈຢາກຊູຊ່ວຍ |
| | ເຊັດນ້ຳຕາໃຫ້ເຫືອດແຫ້ງ | ຈອມແພງອ້າຍຈື່ບໍ່ລືມ ເຈົ້າແລ້ວ..... |
| ແຕ່ວ່າ | ພຽງແຕ່ຄຶດໄດ້ເທົ່ານັ້ນ | ບໍ່ກ້າເອີ່ຍທວງຖາມ |
| | ຢ້ານສາວງາມສີພັນດອນ | ຊິແງ່ງອນໃຫ້ເປັນບ້າ |
| | ຢາກອາສາໄປໂຊມອຸ້ມ | ໃຫ້ດອນພິງຊົບໄຫຼ່ |
| | ສາວຜູ່ໄທທ່າໃຫຍ່ | ບໍ່ເຄີຍແນມເບິ່ງອ້າຍ |
| | | ຜູ່ຫມາຍມ້ວນຮັກນາງ ຫັ້ນແລ້ວ..... |

| | | |
|---|---|---|
| ໂອ່ຍນໍ | ຄຶດຂຶ້ນມາຍັງໃຈແປ້ວ | ແນວເພິ່ນບໍ່ຫຼຽວແລ |
| | ໃຈເພິ່ນແວນໍາຊາຍ | ຜູ່ຊີ່ສຽງເຂົາສູງຫນ້າ |
| | ໄດ້ແຕ່ໂສກາລີ້ | ເຂົາຄຶງຕິເຮົາຊັ້ນຕໍ່າ |
| | ຮູບບໍ່ງາມຜິວດໍາກໍ່າ | ຫນໍາຊໍ້າເປັນຮຸ່ນນ້ອງ |
| | | ເຂົາມອງຂ້າມດູຖູກເຮົາ  ແທ້ແລ້ວ... |
| ຈົນວ່າ | ຮອດສາມປີອ້າຍທົນເຝົ້າ | ເຂົາຫນີໄກຮຽນຈົບກ່ອນ |
| | ດອນຈາກໄປບໍ່ຮ່ອນຮູ້ | ຈັກຕິກກໍ້າຝ່າຍໃດ |
| | ດອນສັງປະໃຫ້ອ້າຍ | ພະວົງໃຈໄປບໍ່ສັ່ງ |
| | ນັ່ງຄືນດຽວຄຶດຮອດເຈົ້າ | ຫົວໃຈເສົ້າຢູ່ຜູ່ດຽວ    ເຈົ້າເອີຍ.... |